ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------------

ສະພາແຫ່ງຊາດ ເລກທີ /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 ກໍລະກົດ 2012

# ກົດໝາຍ
# ວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການກວດກາການສົ່ງຜູ້ຮ້າຍຂ້າມແດນ ເພື່ອໃຫ້ມີຄວາມຖືກຕ້ອງ ເປັນທໍາ, ສອດຄ່ອງກັບກົດໝາຍຂອງ ສປປ ລາວ, ລະບຽບການສາກົນ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ, ແນໃສ່ຕ້ານ ແລະ ສະກັດກັ້ນອາຊະຍາກໍາ, ປະກອບສ່ວນເຮັດໃຫ້ການຮ່ວມມືສາກົນໃນວຽກງານດັ່ງກ່າວ ມີປະສິດທິຜົນບົນພື້ນຖານການເຄົາລົບຄວາມເປັນເອກະລາດ, ອະທິປະໄຕ, ພື້ນແຜ່ນດິນອັນຄົບຖ້ວນຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 2. ການສົ່ງຜູ້ຮ້າຍຂ້າມແດນ**

ຜູ້ຮ້າຍຂ້າມແດນ ແມ່ນ ບຸກຄົນທີ່ຖືກກ່າວຫາ ຫຼື ໄດ້ຖືກສານຕັດສິນ ວ່າເປັນຜູ້ກະທໍາຜິດທາງອາຍາ ຢູ່ ລັດຕ່າງປະເທດແຕ່ໄດ້ເອົາຕົວຫຼົບໜີ ມາຢູ່ດິນແດນຂອງ ສປປ ລາວ ຫຼື ຖືກກ່າວຫາ ຫຼື ຖືກສານຕັດສິນ ຢູ່ ສປປ ລາວ ແຕ່ໄດ້ເອົາຕົວຫຼົບໜີໄປຢູ່ ດິນແດນຂອງລັດຕ່າງປະເທດ.

ການສົ່ງຜູ້ຮ້າຍຂ້າມແດນ ແມ່ນ ການສົ່ງມອບ ຜູ້ຖືກຫາ ຫຼື ຜູ້ກະທໍາຜິດ ທີ່ຕ້ອງການຕົວ ໂດຍລັດທີ່ຖືກຮ້ອງຂໍ ໃຫ້ແກ່ລັດທີ່ຮ້ອງຂໍ ເພື່ອນໍາໄປດໍາເນີນຄະດີອາຍາ ຫຼື ປະຕິບັດໂທດຢູ່ໃນລັດທີ່ຮ້ອງຂໍ.

**ມາດຕາ 3. ການອະທິບາຍຄຳສັບ**

**ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:**

1. **ລັດທີ່ຮ້ອງຂໍ ໝາຍເຖິງ** ລັດໃດໜຶ່ງ ທີ່ຮ້ອງຂໍໃຫ້ລັດອື່ນສົ່ງມອບຜູ້ຖືກຫາ ຫຼື ຜູ້ກະທຳຜິດທີ່ຕ້ອງການຕົວ ເພື່ອສົ່ງມອບຂ້າມແດນ;

2. **ລັດທີ່ຖືກຮ້ອງຂໍ ໝາຍເຖິງ** ລັດໃດໜຶ່ງ ຊຶ່ງລັດອື່ນຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ;

3. **ບຸກຄົນທີ່ຕ້ອງການຕົວ ໝາຍເຖິງ** ຜູ້ຖືກຫາ ຫຼື ຜູ້ກະທຳຜິດ;

4. **ພາຄີ ໝາຍເຖິງ** ລັດ, ອົງການຈັດຕັ້ງສາກົນ ຫຼື ພາກພື້ນ, ນິຕິບຸກຄົນອື່ນ ຕາມກົດໝາຍສາກົນ ທີ່ໄດ້ສະໝັກໃຈຮັບປະຕິບັດຂໍ້ຜູກພັນ ຕາມສົນທິສັນຍາສາກົນ ແລະ ສົນທິສັນຍາ ດັ່ງກ່າວ ໄດ້ມີຜົນສັກສິດຕໍ່ລັດ, ອົງການຈັດຕັ້ງ ແລະ ນິຕິບຸກຄົນ ເຫຼົ່ານັ້ນແລ້ວ;

5. **ອາຊະຍາກຳ ໝາຍເຖິງ** ການກະທຳຜິດທາງອາຍາ;

6. **ອົງການໃຈກາງປະສານງານ ໝາຍເຖິງ** ອົງການຈັດຕັ້ງທີ່ຮັບຜິດຊອບປະສານງານ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມສົນທິສັນຍາທີ່ ສປປ ລາວ ເປັນພາຄີ;

7. **ອົງການທີ່ມີສິດອຳນາດຂອງ ສປປ ລາວ ໝາຍເຖິງ** ກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ.

**ມາດຕາ 4. ຫຼັກການ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ**

**ການສົ່ງຜູ້ຮ້າຍຂ້າມແດນ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:**

1. ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນຮ່ວມມື, ຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ທາງດ້ານຍຸຕິທຳ;

2. ເຄົາລົບ ແລະ ປະຕິບັດສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ;

3. ຕ້ອງແມ່ນການກະທຳຜິດທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ຂອງລັດທີ່ຮ້ອງຂໍ ແລະ ລັດທີ່ຖືກຮ້ອງຂໍ;

4. ເຄົາລົບ ກຽດສັກສີ ແລະ ສິດເສລີພາບຂອງບຸກຄົນທີ່ຕ້ອງການຕົວ.

**ມາດຕາ 5. ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ອາໄສຢູ່ໃນ ຫຼື ນອກດິນແດນ ສປປ ລາວ ທີ່ໄດ້ກະທຳຜິດທາງອາຍາ ຢູ່ ສປປ ລາວ ຫຼື ຢູ່ລັດຕ່າງປະເທດ.

ກົດໝາຍສະບັບນີ້ ນຳໃຊ້ ສຳລັບການສົ່ງຜູ້ຮ້າຍຂ້າມແດນ ທັງໃນກໍລະນີທີ່ ສປປ ລາວ ເປັນພາຄີ ຫຼື ບໍ່ເປັນພາຄີ ຂອງສົນທິສັນຍາ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ.

**ມາດຕາ 6. ການຮ່ວມມືສາກົນ**

ລັດ ຊຸກຍູ້ການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ການສຳມະນາ, ການຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາການ ແລະ ການຊ່ວຍເຫຼືອ ເພື່ອພັດທະນາວຽກງານສົ່ງຜູ້ຮ້າຍຂ້າມແດນ, ປະຕິບັດສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຫຼື ປະຕິບັດຕາມຫຼັກການຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ທາງດ້ານຍຸຕິທຳ.

## ໝວດທີ 2
## ການສົ່ງ ແລະ ການປະຕິເສດການສົ່ງຜູ້ຮ້າຍຂ້າມແດນ

**ມາດຕາ 7. ການກະທຳຜິດທີ່ພາໃຫ້ມີການສົ່ງຜູ້ຮ້າຍຂ້າມແດນ**

ການກະທຳຜິດທີ່ພາໃຫ້ມີການສົ່ງຜູ້ຮ້າຍຂ້າມແດນ ຕ້ອງເປັນການກະທຳຜິດ ທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາຂອງ ສປປ ລາວ ແລະ ຂອງລັດທີ່ຮ້ອງຂໍ ຊຶ່ງກຳນົດໂທດຕັດອິດສະລະພາບ ເກີນກວ່າສິບສອງເດືອນ ໂດຍບໍ່ຂຶ້ນກັບວ່າ ກົດໝາຍອາຍາ ຂອງ ສປປ ລາວ ຫຼື ຂອງລັດທີ່ຮ້ອງຂໍໄດ້ກຳນົດເປັນການກະທຳຜິດສະຖານດຽວກັນ ຫຼື ບໍ່ແມ່ນສະຖານດຽວກັນກໍຕາມ.

ໃນກໍລະນີ ການຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ເພື່ອປະຕິບັດໂທດ ຫຼື ສືບຕໍ່ປະຕິບັດໂທດຕັດອິດສະລະພາບຕາມຄຳຕັດສິນຂອງສານ ຂອງລັດທີ່ຮ້ອງຂໍນັ້ນ ການສົ່ງຜູ້ຮ້າຍຂ້າມແດນ ຈະປະຕິບັດໄດ້ ກໍຕໍ່ເມື່ອກຳນົດເວລາຂອງໂທດຕັດອິດສະລະພາບ ຫາກຍັງເຫຼືອບໍ່ຕ່ຳກວ່າ ຫົກ ເດືອນ.

ຖ້າວ່າ ຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຫາກກ່ຽວຂ້ອງກັບການກະທຳຜິດ ສອງ ຫຼື ຫຼາຍສະຖານຊຶ່ງແຕ່ລະການກະທຳຜິດນັ້ນ ກໍເປັນການກະທຳຜິດຕາມກົດໝາຍຂອງລັດທີ່ຮ້ອງຂໍ ແລະ ຂອງ ສປປ ລາວ ແລ້ວ ແລະ ຢ່າງໜ້ອຍ ການກະທຳຜິດໃດໜຶ່ງ ຫາກມີເງື່ອນໄຂທາງດ້ານກຳນົດເວລາຂອງໂທດຕາມທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ແລະ ສອງ ຂອງມາດຕານີ້ ສປປ ລາວ ອາດຕົກລົງໃຫ້ມີການສົ່ງຜູ້ຮ້າຍຂ້າມແດນ ສຳລັບການກະທຳຜິດທັງໝົດ ກໍໄດ້.

**ມາດຕາ 8. ການປະຕິເສດຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ**

**ຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຈະຖືກປະຕິເສດ ໃນກໍລະນີໃດໜຶ່ງ ດັ່ງນີ້:**

1. ການກະທຳຜິດ ທາງດ້ານການເມືອງ ເປັນຕົ້ນ ການຕໍ່ສູ້ ເພື່ອອິດສະລະພາບ, ສັນຕິພາບ ແລະ ຄຳເຫັນດ້ານການເມືອງ, ຍົກເວັ້ນການກະທຳຜິດທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້;
2. ການກະທຳຜິດທາງທະຫານ ຂອງລັດທີ່ຮ້ອງຂໍ ເປັນຕົ້ນ ການຫຼົບໜີຈາກການເປັນທະຫານພັນທະ, ການບໍ່ປະຕິບັດຄຳສັ່ງຂອງຜູ້ບັງຄັບບັນຊາ;
3. ການດຳເນີນຄະດີ ຫຼື ການປະຕິບັດໂທດ ກ່ຽວກັບການກະທຳຜິດທີ່ຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ເປັນໂມຄະຕາມກົດໝາຍຂອງລັດທີ່ຮ້ອງຂໍ ແລະ ຕາມກົດໝາຍຂອງ ສປປ ລາວ;

4. ສານຂອງ ສປປ ລາວ ໄດ້ຕັດສິນ ຫຼື ໄດ້ພິພາກສາ ຢ່າງເດັດຂາດແລ້ວ ກ່ຽວກັບບຸກຄົນທີ່ຕ້ອງການຕົວ ໃນສະຖານການກະທຳຜິດດຽວກັນ ກ່ອນການຮ້ອງຂໍໃຫ້ສົ່ງຜູ່ກ່ຽວຂ້າມແດນ;

5. ການຕັດສິນຂອງສານ ຂອງລັດທີ່ຮ້ອງຂໍນັ້ນ ໄດ້ດຳເນີນໂດຍລັບຫຼັງ ເວັ້ນເສັຍແຕ່ລັດທີ່ຮ້ອງຂໍໄດ້ຮັບປະກັນວ່າ ບຸກຄົນທີ່ຕ້ອງການຕົວນັ້ນ ຈະມີໂອກາດໄດ້ຕໍ່ສູ້ຄະດີຢ່າງເປັນທຳ ແລະ ຈະໄດ້ຖືກພິຈາລະນາຄະດີຄືນໃໝ່ ໂດຍການເຂົ້າຮ່ວມຂອງຜູ່ກ່ຽວ.

**ມາດຕາ 9. ການກະທຳ ທີ່ບໍ່ຖືວ່າເປັນການກະທຳຜິດທາງດ້ານການເມືອງ**

**ການກະທຳ ທີ່ບໍ່ຖືວ່າເປັນການກະທຳຜິດທາງດ້ານການເມືອງ ມີ ດັ່ງນີ້:**

1. ການຄາດຕະກຳ ຫຼື ຄວາມພະຍາຍາມຄາດຕະກຳ ຫຼື ທຳຮ້າຍຮ່າງກາຍ ປະມຸກລັດ, ປະທານສະພາແຫ່ງຊາດ, ຫົວໜ້າລັດຖະບານ ຫຼື ຜູ່ນຳອື່ນ ແລະ ສະມາຊິກໃນຄອບຄົວຂອງບຸກຄົນດັ່ງກ່າວ;

2. ການໂຈລະກຳ;

3. ການບຸກລຸກຄ້າຍຄຸມຂັງ, ຄ້າຍດັດສ້າງ;

4. ການກະທຳຜິດຕໍ່ປະເທດເພື່ອນມິດ;

5. ການລັກພາຕົວ ຫຼື ການຈັບເປັນຕົວປະກັນ;

6. ການວາງລະເບີດ, ການຈູດ, ການນຳໃຊ້ອຸປະກອນ ຫຼື ສານເຄມີ ທີ່ອາດເປັນອັນຕະລາຍ ຕໍ່ຊີວິດ ຫຼື ສ້າງຄວາມເສັຍຫາຍທີ່ຮ້າຍແຮງຕໍ່ຮ່າງກາຍ ຫຼື ຕໍ່ຊັບສິນ ຢ່າງຫຼວງຫຼາຍ;

7. ການກະກຽມ, ຄວາມພະຍາຍາມ ຫຼື ການເຂົ້າຮ່ວມໃນການກະທຳຜິດ, ການໃຫ້ຄຳປຶກສາ, ການຊ່ວຍເຫຼືອ ຫຼື ການຍຸແຍ່ ໃຫ້ບຸກຄົນອື່ນເຂົ້າຮ່ວມໃນການກະທຳຜິດຕາມ ຂໍ້ 1 ຫາ ຂໍ້ 3 ຂອງມາດຕານີ້.

**ມາດຕາ 10. ການປະຕິເສດການສົ່ງຜູ່ຮ້າຍຂ້າມແດນ**

**ການສົ່ງຜູ່ຮ້າຍຂ້າມແດນ ອາດຖືກປະຕິເສດ ໃນກໍລະນີໃດໜຶ່ງ ດັ່ງນີ້:**

1. ສປປ ລາວ ມີສິດອຳນາດຕາມກົດໝາຍ ໃນການດຳເນີນຄະດີຕໍ່ການກະທຳຜິດໃດໜຶ່ງ ທີ່ໄດ້ອ້າງເຖິງ ຢູ່ໃນຄຳຮ້ອງຂໍສົ່ງຜູ່ຮ້າຍຂ້າມແດນ ແລະ ຈະດຳເນີນຄະດີຕໍ່ບຸກຄົນທີ່ຕ້ອງການຕົວ;

2. ສປປ ລາວ ກຳລັງດຳເນີນຄະດີ ຕໍ່ບຸກຄົນທີ່ຖືກຮ້ອງຂໍ ໃຫ້ສົ່ງຕົວກ່ຽວກັບການກະທຳຜິດດຽວກັນ;

3. ສປປ ລາວ ເຫັນວ່າ ການສົ່ງຜູ່ຮ້າຍຂ້າມແດນ ອາດບໍ່ສອດຄ່ອງກັບເຫດຜົນທາງດ້ານມະນຸດສະທຳ ອັນເນື່ອງມາຈາກບັນຫາເຊື້ອຊາດ, ສັນຊາດ, ສາສະໜາ, ເຜົ່າ, ເພດ, ຖານະທາງດ້ານສັງຄົມ ຫຼື ຖານະທາງດ້ານເສດຖະກິດ ຂອງບຸກຄົນທີ່ຕ້ອງການຕົວ ຊຶ່ງອາດຖືກທໍລະມານ ຫຼື ຖືກປະຕິບັດ ຢ່າງໄຮ້ມະນຸດສະທຳ.

**ມາດຕາ 11. ການປະຕິເສດການສົ່ງພົນລະເມືອງລາວ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ທີ່ອາໄສ ຢູ່ ສປປ ລາວ**

ສປປ ລາວ ປະຕິເສດການສົ່ງພົນລະເມືອງລາວ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ທີ່ອາໄສ ຢູ່ ສປປ ລາວ ຊຶ່ງໄດ້ກະທຳຜິດທາງອາຍາຢູ່ນອກດິນແດນ ສປປ ລາວ ເວັ້ນເສຍແຕ່ສົນທິສັນຍາ ວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

ການປະຕິເສດ ສົ່ງບຸກຄົນດັ່ງກ່າວຂ້າມແດນ ຕາມຄຳຮ້ອງຂໍ ບໍ່ເປັນສາເຫດພາໃຫ້ຜູ້ກ່ຽວຫຼຸດພົ້ນອອກຈາກຄວາມຮັບຜິດຊອບທາງອາຍາ ແລະ ຜູ້ກ່ຽວຍັງຈະຖືກດຳເນີນຄະດີອາຍາ ຢູ່ ສປປ ລາວ ຕາມກົດໝາຍ ຂອງ ສປປ ລາວ.

ລັດ ທີ່ຮ້ອງຂໍສົ່ງຜູ້ຮ້າຍຂ້າມແດນ ຈະສົ່ງສຳນວນຄະດີ ແລະ ຂໍ້ມູນທີ່ກ່ຽວຂ້ອງໃຫ້ອົງການທີ່ມີສິດອຳນາດ ຂອງ ສປປ ລາວ ເພື່ອດຳເນີນຄະດີຕໍ່ພົນລະເມືອງລາວ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດນັ້ນ.

## ໝວດທີ 3
## ການຮ້ອງຂໍ ແລະ ການພິຈາລະນາຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ

**ມາດຕາ 12. ການຍື່ນຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ**

ການຍື່ນຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຈາກລັດທີ່ຮ້ອງຂໍມາຍັງ ສປປ ລາວ ຫຼື ຈາກ ສປປ ລາວ ໄປຍັງລັດທີ່ຖືກຮ້ອງຂໍ ໃຫ້ດຳເນີນຜ່ານທາງການທູດ.

ສຳລັບການຍື່ນຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຕາມສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ ທີ່ ສປປ ລາວ ເປັນພາຄີ ໃຫ້ປະຕິບັດຕາມກົນໄກທີ່ໄດ້ກຳນົດໄວ້ໃນສົນທິສັນຍານັ້ນ.

**ມາດຕາ 13. ຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ**

**ຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຕ້ອງເຮັດເປັນລາຍລັກອັກສອນ ແລະ ມີ ເນື້ອໃນ ດັ່ງນີ້:**

1. ຊື່ ຂອງອົງການທີ່ຮ້ອງຂໍ;
2. ຊື່ ແລະ ນາມສະກຸນ, ອາຍຸ, ເພດ, ສັນຊາດ, ຮູບຖ່າຍ, ປະເພດ ແລະ ເລກທີ ຂອງເອກະສານກ່ຽວກັບ ຮູບປະພັນ ຫຼື ຈຸດພິເສດ, ອາຊີບ ແລະ ທີ່ຢູ່ ຫຼື ທີ່ພັກອາໄສ ຂອງບຸກຄົນທີ່ຕ້ອງການຕົວ ແລະ ຂໍ້ມູນອື່ນ ຂອງບຸກຄົນນັ້ນ;
3. ການສັງລວມຫຍໍ້ ກ່ຽວກັບການກະທຳຜິດ ທີ່ເວົ້າເຖິງສະຖານການກະທຳຜິດ, ວັນ, ເວລາ, ສະຖານທີ່ ແລະ ຜົນຂອງການກະທຳຜິດ;
4. ບົດບັນຍັດຂອງກົດໝາຍທີ່ກ່ຽວຂ້ອງກັບຂໍ້ກ່າວຫາ ຫຼື ສະຖານການກະທຳຜິດ, ໂທດ ແລະ ສິດອຳນາດຂອງສານ ຂອງລັດທີ່ຮ້ອງຂໍ;
5. ບົດບັນຍັດຂອງກົດໝາຍທີ່ກ່ຽວຂ້ອງກັບອາຍຸຄວາມໃນການຮ້ອງຟ້ອງ ຫຼື ອາຍຸຄວາມ ກ່ຽວກັບການປະຕິບັດໂທດ.

### ມາດຕາ 14. ເອກະສານປະກອບຄໍາຮ້ອງຂໍ

**ເອກະສານ ປະກອບຄໍາຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ເພື່ອດໍາເນີນຄະດີ ມີ ດັ່ງນີ້:**

1. ສໍາເນົາຄໍາສັ່ງຈັບຕົວ ຂອງໄອຍະການ, ສານ ຫຼື ເຈົ້າໜ້າທີ່ອື່ນ ທີ່ມີສິດອໍານາດ ຂອງລັດທີ່ຮ້ອງຂໍ;

2. ຂໍ້ມູນຫຼັກຖານ ທີ່ເປັນພື້ນຖານໃຫ້ແກ່ການຈັບຕົວ ແລະ ການດໍາເນີນຄະດີຢູ່ສານຕໍ່ບຸກຄົນດັ່ງກ່າວ ລວມທັງຂໍ້ມູນຫຼັກຖານທີ່ຊີ້ໃຫ້ເຫັນວ່າບຸກຄົນທີ່ຕ້ອງການຕົວນັ້ນ ແມ່ນບຸກຄົນດຽວກັນກັບບຸກຄົນທີ່ໄດ້ກ່າວໄວ້ໃນຄໍາສັ່ງຈັບຕົວ.

**ເອກະສານ ປະກອບຄໍາຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ເພື່ອປະຕິບັດໂທດ ມີ ດັ່ງນີ້:**

1. ສໍາເນົາຄໍາຕັດສິນ ຫຼື ຄໍາພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດ ຂອງລັດທີ່ຮ້ອງຂໍ;

2. ຂໍ້ມູນຫຼັກຖານທີ່ສະແດງ ໃຫ້ເຫັນວ່າ ບຸກຄົນທີ່ຖືກຮ້ອງຂໍໃຫ້ສົ່ງຕົວເປັນບຸກຄົນດຽວກັນກັບບຸກຄົນທີ່ໄດ້ອ້າງເຖິງໃນຄໍາຕັດສິນ ຫຼື ຄໍາພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ;

3. ໃບຢັ້ງຢືນໄລຍະເວລາ ໃນການປະຕິບັດໂທດຜ່ານມາ ແລະ ໂທດທີ່ຍັງຄ້າງປະຕິບັດຕາມຄໍາຕັດສິນ ຫຼື ຄໍາພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດ;

4. ໃນກໍລະນີການຕັດສິນລັບຫຼັງ ຕ້ອງໃຫ້ມີຄໍາຊີ້ແຈງ ຫຼື ການຢັ້ງຢືນທາງດ້ານກົດໝາຍເພື່ອຮັບປະກັນໃຫ້ບຸກຄົນທີ່ຕ້ອງການຕົວນັ້ນ ສາມາດຕໍ່ສູ້ຄະດີ ຫຼື ມີໂອກາດໄດ້ຮັບການພິຈາລະນາຕັດສິນຄະດີຄືນໃໝ່ ໂດຍມີການເຂົ້າຮ່ວມຂອງຜູ້ກ່ຽວ.

ເອກະສານທັງໝົດ ຊຶ່ງລັດທີ່ຮ້ອງຂໍໄດ້ສົ່ງມາ ຕາມມາດຕານີ້ ຫຼື ຕາມສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ ທີ່ ສປປ ລາວ ເປັນພາຄີ ຕ້ອງລົງລາຍເຊັນ ແລະ ປະທັບຕາ ພ້ອມທັງແປເປັນພາສາລາວ ຫຼື ເປັນພາສາອື່ນ ຕາມທີ່ໄດ້ກໍານົດໄວ້ໃນສົນທິສັນຍາດັ່ງກ່າວ.

### ມາດຕາ 15. ຄໍາຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຈາກຫຼາຍລັດ

ເມື່ອມີຄໍາຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນຈາກ ສອງ ຫຼື ຫຼາຍລັດພ້ອມກັນ ທີ່ຕ້ອງການບຸກຄົນດຽວກັນ ໃນສະຖານການກະທໍາຜິດດຽວກັນ ຫຼື ຕ່າງກັນກໍຕາມ ກະຊວງການຕ່າງປະເທດ ຈະເປັນຜູ້ຕົກລົງວ່າ ຄໍາຮ້ອງຂໍຈາກລັດໃດຈະຖືກນໍາມາພິຈາລະນາ ໂດຍຄໍານຶງເຖິງ ຫຼັກການ ຫຼື ພັນທະທີ່ໄດ້ກໍານົດໄວ້ໃນສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ, ເວລາ ແລະ ສະຖານທີ່ຂອງການກະທໍາຜິດ, ລະດັບຄວາມເປັນອັນຕະລາຍຂອງການກະທໍາຜິດ, ເວລາໄດ້ຮັບຄໍາຮ້ອງຂໍ, ສັນຊາດ ແລະ ທີ່ຢູ່ປະຈໍາຂອງບຸກຄົນທີ່ຕ້ອງການຕົວ, ຜູ້ຖືກເຄາະຮ້າຍ ແລະ ຈຸດປະສົງໃນການສົ່ງຜູ້ຮ້າຍຂ້າມແດນ.

### ມາດຕາ 16. ການພິຈາລະນາຄໍາຮ້ອງຂໍ

ພາຍຫຼັງໄດ້ຮັບຄໍາຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ແລະ ເອກະສານປະກອບແລ້ວ ກະຊວງການຕ່າງປະເທດ ຫຼື ອົງການໃຈກາງປະສານງານ ຕາມທີ່ໄດ້ກໍານົດໄວ້ໃນສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ ກວດກາຄໍາຮ້ອງຂໍດັ່ງກ່າວວ່າມີຂໍ້ມູນຄົບຖ້ວນ ຫຼື ບໍ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 13 ແລະ 14 ຂອງກົດໝາຍສະບັບນີ້ ຫຼື ຕາມສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ ພ້ອມທັງບັນຫາທີ່ກ່ຽວຂ້ອງກັບສາຍພົວພັນທາງການທູດ ແລະ ຜົນປະໂຫຍດ ຂອງ ສປປ ລາວ.

ຖ້າເຫັນວ່າຄໍາຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຫາກມີເນື້ອໃນ ແລະ ເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນວັກທີ 1 ຂອງມາດຕານີ້ ກະຊວງການຕ່າງປະເທດ ຕ້ອງສົ່ງໃຫ້ອົງການໄອຍະການປະຊາຊົນສູງສຸດ ເພື່ອດໍາເນີນຕາມຂັ້ນຕອນການພິຈາລະນາສົ່ງຜູ້ຮ້າຍຂ້າມແດນໃນຂັ້ນຕໍ່ໄປ.

ຖ້າເຫັນວ່າ ຂໍ້ມູນທີ່ໄດ້ສະເໜີມາ ຕາມຄໍາຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນນັ້ນ ຫາກຍັງບໍ່ທັນຄົບຖ້ວນພຽງພໍ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 13 ແລະ 14 ຂອງກົດໝາຍສະບັບນີ້ ຫຼື ຕາມສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນແລ້ວ ກະຊວງການຕ່າງປະເທດ ຫຼື ອົງການໃຈກາງປະສານງານກໍຈະຮ້ອງຂໍເອົາຂໍ້ມູນເພີ່ມເຕີມພາຍໃນກໍານົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍເປັນຕົ້ນໄປ ຫຼື ຕາມທີ່ໄດ້ກໍານົດໄວ້ໃນສົນທິສັນຍາດັ່ງກ່າວ.

ລັດ ທີ່ຮ້ອງຂໍ ຕ້ອງປະກອບຂໍ້ມູນເພີ່ມເຕີມ ຕາມການສະເໜີ ພາຍໃນກໍານົດເວລາ ສີ່ສິບຫ້າວັນ ນັບແຕ່ວັນລັດທີ່ຮ້ອງຂໍໄດ້ຮັບຄໍາສະເໜີເອົາຂໍ້ມູນເພີ່ມເຕີມເປັນຕົ້ນໄປ. ຖ້າວ່າ ລັດທີ່ຮ້ອງຂໍ ຫາກບໍ່ສົ່ງຂໍ້ມູນເພີ່ມເຕີມຕາມການສະເໜີ ພາຍໃນກໍານົດເວລາດັ່ງກ່າວ ໃຫ້ຖືວ່າລັດທີ່ຮ້ອງຂໍນັ້ນ ໄດ້ຖອນຄໍາຮ້ອງຂໍຂອງຕົນດ້ວຍຄວາມສະໝັກໃຈ ແຕ່ກໍບໍ່ໄດ້ເສັຍສິດໃນການຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນຄືນໃໝ່.

## ໝວດທີ 4
## ການພິຈາລະນາການສົ່ງຜູ້ຮ້າຍຂ້າມແດນ

### ມາດຕາ 17. ການຈັບຕົວ ແລະ ການກັກຂັງພາງ

ໃນກໍລະນີທີ່ອົງການໄອຍະການປະຊາຊົນສູງສຸດ ຫາກເຫັນວ່າຄໍາຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນມີເງື່ອນໄຂຄົບຖ້ວນແລ້ວ ກໍຈະມອບໃຫ້ອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ອອກຄໍາສັ່ງຈັບຕົວບຸກຄົນທີ່ຕ້ອງການຕົວ ພາຍໃນກໍານົດເວລາ ເຈັດວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍດັ່ງກ່າວ ຈາກກະຊວງການຕ່າງປະເທດເປັນຕົ້ນໄປ ເພື່ອສົ່ງໃຫ້ສານປະຊາຊົນນະຄອນຫຼວງວຽງຈັນ ພິຈາລະນາຕັດສິນ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ.

ໃນກໍລະນີທີ່ອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ຫາກເຫັນວ່າ ຄໍາຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ບໍ່ມີຂໍ້ມູນພຽງພໍ ກໍຈະລາຍງານໃຫ້ອົງການໄອຍະການປະຊາຊົນສູງສຸດ ເພື່ອສະເໜີຕໍ່ກະຊວງການຕ່າງປະເທດ ທວງເອົາຂໍ້ມູນເພີ່ມເຕີມສໍາລັບການຈັບຕົວ ຫຼື ກັກຂັງພາງ ບຸກຄົນທີ່ຕ້ອງການຕົວນັ້ນ.

ໃນກໍລະນີຮີບດ່ວນ ລັດທີ່ຮ້ອງຂໍ ອາດຮ້ອງຂໍໃຫ້ຈັບຕົວ ແລະ ກັກຂັງພາງບຸກຄົນທີ່ຕ້ອງການຕົວໄວ້ກ່ອນຊົ່ວຄາວ ກ່ອນຈະສົ່ງຄໍາຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນຢ່າງເປັນທາງການໂດຍຜ່ານທາງການທູດ ຫຼື ຕາມສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ.

ພາຍຫຼັງໄດ້ຮັບຄໍາຮ້ອງຂໍແລ້ວ ກະຊວງການຕ່າງປະເທດ ຈະສົ່ງໃຫ້ອົງການໄອຍະການປະຊາຊົນສູງສຸດ ເພື່ອມອບໃຫ້ອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ອອກຄໍາສັ່ງຈັບຕົວ ພາຍໃນກໍານົດເວລາ ສາມວັນ ຕາມຂັ້ນຕອນຂອງກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາຂອງ ສປປ ລາວ.

ເມື່ອໄດ້ຈັບຕົວ ແລະ ກັກຂັງພາງບຸກຄົນທີ່ຕ້ອງການຕົວ ຕາມຄຳຮ້ອງຂໍແລ້ວ ຖ້າວ່າ ລັດທີ່ຮ້ອງຂໍ ຫາກບໍ່ສົ່ງຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ພ້ອມດ້ວຍເອກະສານຕ່າງໆ ຢ່າງເປັນທາງການ ຕາມກົດໝາຍສະບັບນີ້ ພາຍໃນກຳນົດເວລາ ຫົກສິບວັນ ນັບແຕ່ວັນໄດ້ຈັບຕົວ ແລະ ກັກຂັງພາງ ຫຼື ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ ຕ້ອງປ່ອຍຕົວບຸກຄົນທີ່ຖືກກັກຂັງພາງນັ້ນ.

ໃນກໍລະນີທີ່ໄດ້ປ່ອຍຕົວຜູ້ຖືກຈັບຕົວ ແລະ ກັກຂັງພາງ ຕາມວັກທີ 4 ຂອງມາດຕານີ້ແລ້ວ ລັດທີ່ຮ້ອງຂໍ ຈະຮ້ອງຂໍໃຫ້ຈັບຕົວບຸກຄົນດັ່ງກ່າວ ຍ້ອນເຫດຜົນທີ່ໄດ້ສະເໜີມາແລ້ວນັ້ນບໍ່ໄດ້ ແຕ່ລັດທີ່ຮ້ອງຂໍ ຍັງມີສິດຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຕາມປົກກະຕິ.

ບຸກຄົນທີ່ຕ້ອງການຕົວ ທີ່ຖືກຈັບຕົວ ແລະ ກັກຂັງພາງ ຈະບໍ່ໄດ້ຮັບອະນຸຍາດໃຫ້ປ່ອຍຕົວພາງ ຈົນກວ່າຈະມີຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ.

**ມາດຕາ 18. ການພິຈາລະນາການສົ່ງຜູ້ຮ້າຍຂ້າມແດນ**

ເມື່ອໄດ້ຈັບຕົວບຸກຄົນທີ່ຕ້ອງການຕົວແລ້ວ ອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ຕ້ອງສົ່ງສຳນວນຄະດີ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຈັບຕົວເປັນຕົ້ນໄປ ໃຫ້ສານປະຊາຊົນນະຄອນຫຼວງວຽງຈັນ ພິຈາລະນາຕັດສິນເປັນຂັ້ນຕົ້ນ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສັ່ງຟ້ອງເປັນຕົ້ນໄປ.

ການພິຈາລະນາການສົ່ງຜູ້ຮ້າຍຂ້າມແດນ ໃນທີ່ປະຊຸມສານ ໃຫ້ມີແຕ່ຄະນະສານ, ຫົວໜ້າອົງການໄອຍະການປະຊາຊົນ, ເຈົ້າໜ້າທີ່ຕຳຫຼວດ, ບຸກຄົນທີ່ຕ້ອງການຕົວ, ທະນາຍຄວາມ, ຜູ້ແປພາສາ, ຜູ້ຕາງໜ້າສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນຂອງລັດທີ່ຮ້ອງຂໍ ແລະ ເຈົ້າໜ້າທີ່ຂອງອົງການອື່ນທີ່ມີສິດອຳນາດ ຂອງ ສປປ ລາວ ເທົ່ານັ້ນ.

**ມາດຕາ 19. ສິດຂອງສານ ໃນການພິຈາລະນາການສົ່ງຜູ້ຮ້າຍຂ້າມແດນ**

**ໃນການພິຈາລະນາການສົ່ງຜູ້ຮ້າຍຂ້າມແດນ ສານ ມີ ສິດ ດັ່ງນີ້:**

1. ກວດກາບຸກຄົນທີ່ຖືກສັ່ງຟ້ອງ ແລະ ຖືກນຳມາປາກົດຕົວຢູ່ສານ ແມ່ນບຸກຄົນທີ່ຕ້ອງການຕົວ ຕາມຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຫຼື ບໍ່;
2. ກວດກາການກະທຳຜິດ ທີ່ບົ່ງໄວ້ໃນຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນນັ້ນ ເປັນການກະທຳຜິດ ທີ່ພາໃຫ້ມີການສົ່ງຜູ້ຮ້າຍຂ້າມແດນ ຕາມກົດໝາຍສະບັບນີ້ ໄດ້ ຫຼື ບໍ່;
3. ກວດກາການກະທຳຜິດ ບໍ່ຕົກຢູ່ໃນເງື່ອນໄຂຂອງການປະຕິເສດການສົ່ງຜູ້ຮ້າຍຂ້າມແດນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8, 10 ແລະ 11 ຂອງກົດໝາຍສະບັບນີ້ ຫຼື ບໍ່.

ໃນກໍລະນີທີ່ສານ ຫາກເຫັນວ່າມີເຫດຜົນໃນການສົ່ງຜູ້ຮ້າຍຂ້າມແດນແລ້ວ ສານກໍຈະຕັດສິນໃຫ້ສົ່ງຜູ້ຮ້າຍຂ້າມແດນ ແລະ ເມື່ອຄຳຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ ກໍໃຫ້ດຳເນີນການສົ່ງຜູ້ຖືກສານຕັດສິນຂ້າມແດນ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ອ່ານຄຳຕັດສິນເປັນຕົ້ນໄປ.

ໃນກໍລະນີທີ່ສານຫາກເຫັນວ່າ ບໍ່ມີເຫດຜົນໃນການສົ່ງຜູ້ຮ້າຍຂ້າມແດນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ຫຼື ບໍ່ມີຂໍ້ມູນຫຼັກຖານພຽງພໍຢັ້ງຢືນໄດ້ວ່າ ບຸກຄົນທີ່ຖືກສັ່ງຟ້ອງ ແລະ ຖືກນໍາມາປາກົດຕົວຢູ່ສານ ແມ່ນບຸກຄົນທີ່ຕ້ອງການຕົວແທ້ ຫຼື ບໍ່ ສານກໍຈະຕັດສິນບໍ່ໃຫ້ສົ່ງຕົວຜູ້ກ່ຽວຂ້າມແດນ.

**ມາດຕາ 20. ການສະເໜີຄັດຄ້ານ ແລະ ການຂໍອຸທອນຄໍາຕັດສິນຂອງສານ**

ອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ມີສິດສະເໜີຄັດຄ້ານຄໍາຕັດສິນຂອງສານ ທີ່ບອກວ່າບໍ່ໃຫ້ສົ່ງຜູ້ຮ້າຍຂ້າມແດນ ແຕ່ຕ້ອງພິຈາລະນາ ພາຍໃນກໍານົດເວລາ ສາມວັນ ນັບແຕ່ວັນໄດ້ອ່ານຄໍາຕັດສິນ ເປັນຕົ້ນໄປ ວ່າຈະສະເໜີຄັດຄ້ານ ຫຼື ບໍ່. ຖ້າຫາກບໍ່ສະເໜີຄັດຄ້ານ ພາຍໃນກໍານົດເວລາດັ່ງກ່າວ ກໍຕ້ອງປ່ອຍຕົວຜູ້ຖືກຈັບຕົວ ໃນທັນໃດ.

ຖ້າວ່າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ຫາກສະເໜີຄັດຄ້ານຄໍາຕັດສິນຂອງສານແລ້ວ ຕ້ອງໄດ້ສະເໜີໃຫ້ອົງການໄອຍະການປະຊາຊົນພາກກາງ ຍື່ນຄໍາສະເໜີຄັດຄ້ານ ພາຍໃນກໍານົດເວລາ ສາມສິບວັນ ນັບແຕ່ວັນໄດ້ອ່ານຄໍາຕັດສິນ ເປັນຕົ້ນໄປ.

ບຸກຄົນທີ່ຕ້ອງການຕົວ ກໍມີສິດຂໍອຸທອນຄໍາຕັດສິນຂອງສານ ທີ່ບອກວ່າໃຫ້ສົ່ງຜູ້ຮ້າຍຂ້າມແດນ ແລະ ຕ້ອງສົ່ງຄໍາຮ້ອງຂໍອຸທອນ ໄປຍັງສານປະຊາຊົນພາກກາງ ພາຍໃນກໍານົດເວລາ ສາມສິບວັນ ນັບແຕ່ວັນໄດ້ອ່ານຄໍາຕັດສິນ ເປັນຕົ້ນໄປ.

ສານປະຊາຊົນພາກກາງ ຕ້ອງຄົ້ນຄວ້າພິຈາລະນາຄໍາສະເໜີຄັດຄ້ານ ຫຼື ຄໍາຮ້ອງຂໍອຸທອນ ພາຍໃນກໍານົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄໍາສະເໜີຄັດຄ້ານ ຫຼື ຄໍາຮ້ອງຂໍອຸທອນ ເປັນຕົ້ນໄປ.

**ມາດຕາ 21. ສິດໃນການພິຈາລະນາຂອງສານປະຊາຊົນພາກກາງ**

ສານປະຊາຊົນພາກກາງ ກວດກາຄໍາຕັດສິນຂອງສານປະຊາຊົນນະຄອນຫຼວງວຽງຈັນ ກ່ຽວກັບຄວາມຖືກຕ້ອງຕາມກົດໝາຍອາຍາ, ກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ ແລະ ກົດໝາຍສະບັບນີ້ ລວມທັງເຫດຜົນໃນການຕັດສິນ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ.

**ປະເພດ ຄໍາພິພາກສາຂອງສານປະຊາຊົນພາກກາງ ມີ ດັ່ງນີ້:**

1. ຢັ້ງຢືນເອົາຕາມຄໍາຕັດສິນຂອງສານປະຊາຊົນນະຄອນຫຼວງວຽງຈັນ ທັງໝົດ;
2. ປ່ຽນແປງຄໍາຕັດສິນຂອງສານປະຊາຊົນນະຄອນຫຼວງວຽງຈັນ ແລະ ພິພາກສາໃຫ້ສົ່ງ ຫຼື ບໍ່ໃຫ້ສົ່ງຜູ້ຮ້າຍຂ້າມແດນ.

ໃນກໍລະນີພິພາກສາບໍ່ໃຫ້ສົ່ງຜູ້ຮ້າຍຂ້າມແດນ ກໍໃຫ້ປ່ອຍຕົວບຸກຄົນທີ່ຕ້ອງການຕົວໃນທັນໃດ.

ຄໍາພິພາກສາຂອງສານປະຊາຊົນພາກກາງ ເປັນຄໍາຕົກລົງຂັ້ນສຸດທ້າຍ.

## ໝວດທີ 5
## ຂັ້ນຕອນການສົ່ງຜູ້ຮ້າຍຂ້າມແດນ

**ມາດຕາ 22. ການດຳເນີນການສົ່ງຜູ້ຮ້າຍຂ້າມແດນ**

ພາຍຫຼັງທີ່ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານໃຊ້ໄດ້ຢ່າງເດັດຂາດແລ້ວ ກະຊວງການຕ່າງປະເທດ ຕ້ອງປະສານສົມທົບກັບອົງການອື່ນທີ່ມີສິດອຳນາດຂອງ ສປປ ລາວ ເພື່ອກະກຽມ ແລະ ດຳເນີນການສົ່ງບຸກຄົນທີ່ຕ້ອງການຕົວໄປຍັງລັດທີ່ຮ້ອງຂໍ ພາຍໃນກຳນົດເວລາ ສາມສິບວັນ ຫຼື ພາຍໃນກຳນົດເວລາທີ່ໄດ້ບົ່ງໄວ້ໃນສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ ນັບແຕ່ວັນໄດ້ອ່ານຄຳຕັດສິນ ຫຼື ຄຳພິພາກສາເປັນຕົ້ນໄປ.

**ມາດຕາ 23. ຂັ້ນຕອນການສົ່ງຜູ້ຮ້າຍຂ້າມແດນ**

**ການສົ່ງຜູ້ຮ້າຍຂ້າມແດນ ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:**

1. ກະຊວງການຕ່າງປະເທດ ຕ້ອງຕົກລົງກັບລັດທີ່ຮ້ອງຂໍ ກ່ຽວກັບ ວັນ, ເວລາ, ສະຖານທີ່ ແລະ ບັນຫາອື່ນ ທີ່ພົວພັນກັບການສົ່ງຜູ້ຮ້າຍຂ້າມແດນ;
2. ໃນກໍລະນີທີ່ ລັດທີ່ຮ້ອງຂໍຫາກບໍ່ຮັບເອົາບຸກຄົນທີ່ຕ້ອງການຕົວ ໂດຍບໍ່ມີເຫດຜົນ ພາຍໃນກຳນົດເວລາທີ່ໄດ້ຕົກລົງກັນ ຫຼື ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ແລະ ຕໍ່ມາໄດ້ຮ້ອງຂໍໃຫ້ສົ່ງບຸກຄົນນັ້ນຂ້າມແດນ ໃນສະຖານການການກະທຳຜິດດຽວກັນອີກ ໃຫ້ປະຕິເສດການສົ່ງຜູ້ຮ້າຍຂ້າມແດນ. ໃນກໍລະນີນີ້ ອົງການທີ່ມີສິດອຳນາດຂອງ ສປປ ລາວ ຕ້ອງປ່ອຍຕົວບຸກຄົນທີ່ຕ້ອງການຕົວໃນທັນໃດ ຫຼັງຈາກກຳນົດເວລາ ຕາມທີ່ໄດ້ບົ່ງໄວ້ໃນມາດຕານີ້ ໄດ້ສິ້ນສຸດລົງ;
3. ໃນກໍລະນີທີ່ ລັດທີ່ຮ້ອງຂໍ ຫາກບໍ່ສາມາດຮັບເອົາ ຫຼື ສປປ ລາວ ບໍ່ສາມາດສົ່ງມອບບຸກຄົນທີ່ຕ້ອງການຕົວນັ້ນພາຍໃນກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນ ວັກທີ 1 ຂອງມາດຕານີ້ ຍ້ອນເຫດການທີ່ບໍ່ຢູ່ພາຍໃຕ້ການຄວບຄຸມຂອງລັດທີ່ຮ້ອງຂໍ ຫຼື ຂອງ ສປປ ລາວ ເຊັ່ນ ໄພພິບັດທາງທຳມະຊາດ, ສປປ ລາວ ຫຼື ລັດທີ່ຮ້ອງຂໍນັ້ນ ຕ້ອງແຈ້ງໃຫ້ກັນຊາບໃນທັນໃດ ເພື່ອຕົກລົງກ່ຽວກັບວັນ, ເວລາ, ສະຖານທີ່ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບການສົ່ງຜູ້ຮ້າຍຂ້າມແດນ.

**ມາດຕາ 24. ການເລື່ອນການມອບຕົວຜູ້ຮ້າຍຂ້າມແດນ**

ເມື່ອບຸກຄົນທີ່ຕ້ອງການຕົວກຳລັງຖືກດຳເນີນຄະດີ ຫຼື ກຳລັງປະຕິບັດໂທດ ຢູ່ ສປປ ລາວ ໃນສະຖານການກະທຳຜິດ ທີ່ບໍ່ແມ່ນການກະທຳຜິດ ຊຶ່ງໄດ້ບົ່ງໄວ້ ໃນຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນນັ້ນ ສປປ ລາວ ອາດເລື່ອນການມອບຕົວບຸກຄົນດັ່ງກ່າວອອກໄປ ຈົນກວ່າການດຳເນີນຄະດີຈະສິ້ນສຸດ ຫຼື ໄດ້ມີການປະຕິບັດໂທດບາງສ່ວນ ຫຼື ທັງໝົດ ຕາມຄຳຕັດສິນ ຫຼື ຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ກະຊວງການຕ່າງປະເທດ ຕ້ອງແຈ້ງໃຫ້ ລັດທີ່ຮ້ອງຂໍຊາບ ກ່ຽວກັບການເລື່ອນດັ່ງກ່າວ.

ຖ້າເຫັນວ່າການເລື່ອນ ຕາມທີ່ໄດ້ກຳນົດໄວ້ໃນວັກທີ 1 ຂອງມາດຕານີ້ ອາດເຮັດໃຫ້ອາຍຸຄວາມໃນການຮ້ອງຟ້ອງສິ້ນສຸດລົງ ຫຼື ອາດເປັນອຸປະສັກໃຫ້ແກ່ການສືບສວນ-ສອບສວນ ຂອງລັດທີ່ຮ້ອງຂໍ

ກ່ຽວກັບການກະທຳຜິດ ທີ່ມີການຮ້ອງຂໍພາໃຫ້ມີການສົ່ງຜູ້ຮ້າຍຂ້າມແດນນັ້ນ ສປປ ລາວ ອາດສົ່ງມອບບຸກຄົນທີ່ຕ້ອງການຕົວດັ່ງກ່າວ ເປັນການຊົ່ວຄາວໃຫ້ລັດທີ່ຮ້ອງຂໍ ແລະ ລັດທີ່ຮ້ອງຂໍ ກໍຕ້ອງສົ່ງບຸກຄົນທີ່ຕ້ອງການຕົວນັ້ນ ຄືນຕາມກຳນົດເວລາ ແລະ ເງື່ອນໄຂທີ່ທັງສອງຝ່າຍໄດ້ຕົກລົງກັນ.

**ມາດຕາ 25. ການພິຈາລະນາຄະດີໃນລັດທີ່ຮ້ອງຂໍ**

**ບຸກຄົນທີ່ຕ້ອງການຕົວ ຕາມຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຈະບໍ່ຖືກດຳເນີນຄະດີອື່ນ ຫຼື ຖືກລົງໂທດ ໃນສະຖານການກະທຳຜິດອື່ນ ໃນລັດທີ່ຮ້ອງຂໍ ແລະ ຈະບໍ່ຖືກສົ່ງໄປຍັງລັດທີສາມ ເວັ້ນເສຍແຕ່:**

1. ສປປ ລາວ ຫາກເຫັນດີ ໃຫ້ມີການດຳເນີນຄະດີ ຫຼື ການປະຕິບັດໂທດອື່ນ ໃນລັດທີ່ຮ້ອງຂໍ ບົນພື້ນຖານການອະທິບາຍ ແລະ ການສົ່ງເອກະສານ ພ້ອມດ້ວຍຂໍ້ມູນຕ່າງໆ ຂອງລັດທີ່ຮ້ອງຂໍນັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ແລະ 14 ຂອງກົດໝາຍສະບັບນີ້ ແລະ ຄຳເຫັນດີຂອງບຸກຄົນທີ່ຕ້ອງການຕົວ ກ່ຽວກັບການດຳເນີນຄະດີ ຫຼື ການປະຕິບັດໂທດອື່ນນັ້ນ;

2. ບຸກຄົນນັ້ນ ບໍ່ໄດ້ອອກຈາກດິນແດນ ຂອງ ລັດທີ່ຮ້ອງຂໍ ພາຍໃນ ສາມສິບວັນ ຫຼັງຈາກໄດ້ຖືກປ່ອຍຕົວ ແຕ່ບໍ່ໃຫ້ນັບກຳນົດເວລາດັ່ງກ່າວ ເຂົ້າໃນໄລຍະເວລາ ທີ່ບຸກຄົນນັ້ນບໍ່ສາມາດອອກຈາກດິນແດນຂອງລັດທີ່ຮ້ອງຂໍ ຍ້ອນເຫດຜົນທີ່ບໍ່ຢູ່ພາຍໃຕ້ການຄວບຄຸມຂອງຜູ້ກ່ຽວ ເຊັ່ນ ໄພພິບັດທາງທຳມະຊາດ;

3. ຫຼັງຈາກໄດ້ອອກໄປແລ້ວ ບຸກຄົນນັ້ນ ໄດ້ກັບຄືນໄປຍັງດິນແດນ ຂອງລັດທີ່ຮ້ອງຂໍອີກເທື່ອໃໝ່ ດ້ວຍຄວາມສະໝັກໃຈຂອງຜູ້ກ່ຽວ.

**ມາດຕາ 26. ການສົ່ງມອບຊັບສິ່ງຂອງ**

ຖ້າວ່າ ລັດທີ່ຮ້ອງຂໍ ຫາກໄດ້ຮ້ອງຂໍໃຫ້ມີການສົ່ງມອບຊັບສິ່ງຂອງທີ່ພົບເຫັນ ຢູ່ໃນດິນແດນ ຂອງ ສປປ ລາວ ຊຶ່ງເປັນຫຼັກຖານທີ່ກ່ຽວຂ້ອງກັບຄະດີ ຫຼື ໄດ້ມາຈາກກະທຳຜິດ ແລະ ກົດໝາຍ ຂອງ ສປປ ລາວ ກໍອະນຸຍາດໃຫ້ສົ່ງມອບຊັບສິ່ງຂອງດັ່ງກ່າວ ເມື່ອມີການສົ່ງຜູ້ຮ້າຍຂ້າມແດນ ສປປ ລາວ ກໍຈະສົ່ງຊັບສິ່ງຂອງທີ່ໄດ້ຍຶດ ຫຼື ອາຍັດ ໃຫ້ແກ່ລັດທີ່ຮ້ອງຂໍ ຕາມຄຳຕັດສິນ ຫຼື ຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ.

ໃນກໍລະນີທີ່ໄດ້ມີການດຳເນີນຄະດີ ຢູ່ ສປປ ລາວ ຕໍ່ບຸກຄົນທີ່ຕ້ອງການຕົວນັ້ນ ສປປ ລາວ ອາດເລື່ອນການສົ່ງມອບຊັບສິ່ງຂອງ ທີ່ໄດ້ກ່າວໄວ້ໃນວັກທີ 1 ຂອງມາດຕານີ້ ຈົນກວ່າຈະຮູ້ຜົນຂອງການສືບສວນ-ສອບສວນ ກ່ຽວກັບຄະດີດັ່ງກ່າວ ຫຼື ສປປ ລາວ ອາດມອບຊັບສິ່ງຂອງນັ້ນ ເປັນການຊົ່ວຄາວໃຫ້ລັດທີ່ຮ້ອງຂໍ ໂດຍມີເງື່ອນໄຂວ່າ ລັດທີ່ຮ້ອງຂໍນັ້ນ ຈະສົ່ງມອບຊັບສິ່ງຂອງດັ່ງກ່າວຄືນໃຫ້ ສປປ ລາວ ໃນທັນໃດ ຫຼັງຈາກໄດ້ຮູ້ຜົນຂອງການສືບສວນ-ສອບສວນ ກ່ຽວກັບຄະດີໃນລັດທີ່ຮ້ອງຂໍ.

ຊັບສິ່ງຂອງທີ່ໄດ້ກຳນົດໄວ້ໃນວັກທີ 1 ຂອງມາດຕານີ້ ຈະຖືກສົ່ງມອບໃຫ້ລັດທີ່ຮ້ອງຂໍ ເຖິງວ່າໄດ້ມີການຕັດສິນໃຫ້ສົ່ງຜູ້ຮ້າຍຂ້າມແດນແລ້ວ ແຕ່ບໍ່ສາມາດສົ່ງຜູ້ຮ້າຍຂ້າມແດນໄດ້ ຍ້ອນວ່າ ບຸກຄົນທີ່ຕ້ອງການຕົວເສຍຊີວິດ ຫຼື ໄດ້ເອົາຕົວຫຼົບໜີ.

ການສົ່ງມອບຊັບສິ່ງຂອງດັ່ງກ່າວ ຈະບໍ່ສ້າງຜົນກະທົບ ຕໍ່ສິດທີ່ຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ຫຼື ລັດທີ່ຮ້ອງຂໍ ຫຼື ບຸກຄົນທີສາມ ຊຶ່ງອາດອ້າງສິດຕໍ່ຊັບສິ່ງຂອງເຫຼົ່ານັ້ນ. ເມື່ອມີການອ້າງສິດ ແລະ ມີການຕັດສິນ ຫຼື ພິພາກສາ ກ່ຽວກັບສິດຕໍ່ຊັບສິ່ງຂອງດັ່ງກ່າວ ຢູ່ໃນດິນແດນ ຂອງ ສປປ ລາວ ແລ້ວ ລັດທີ່ຮ້ອງຂໍ ຕ້ອງສົ່ງມອບຊັບສິ່ງຂອງທີ່ໄດ້ຮັບໄປແລ້ວນັ້ນ ຄືນໃຫ້ ສປປ ລາວ ໂດຍໄວ.

**ມາດຕາ 27. ການອະນຸຍາດໃຫ້ສົ່ງຕົວຜ່ານແດນ**

ໃນກໍລະນີ ທີ່ມີການສົ່ງບຸກຄົນທີ່ຕ້ອງການຕົວ ຜ່ານດິນແດນ ຂອງ ສປປ ລາວ ຈາກລັດໜຶ່ງ ຫຼື ລັດທີ່ສົ່ງຜູ້ຮ້າຍຂ້າມແດນ ໄປຍັງລັດທີ່ຮ້ອງຂໍ, ລັດທີ່ຮ້ອງຂໍ ຫຼື ລັດທີ່ຈະສົ່ງ ຕ້ອງຂໍອະນຸຍາດການສົ່ງຕົວຜ່ານແດນ ຈາກກະຊວງການຕ່າງປະເທດ ຂອງ ສປປ ລາວ. ກະຊວງການຕ່າງປະເທດ ໂດຍປະສານສົມທົບກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ພິຈາລະນາການໃຫ້ອະນຸຍາດສົ່ງຕົວຜ່ານແດນ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍ ເປັນຕົ້ນໄປ.

ໃນກໍລະນີທີ່ມີຄວາມຈຳເປັນຕ້ອງກັກຕົວຊົ່ວຄາວ ຜູ້ທີ່ຖືກສົ່ງຕົວ ຜ່ານດິນແດນຂອງ ສປປ ລາວ ແລ້ວການກັກຕົວຊົ່ວຄາວນັ້ນ ບໍ່ໃຫ້ເກີນ ຊາວສີ່ ຊົ່ວໂມງ. ລັດທີ່ຮ້ອງຂໍ ຫຼື ລັດທີ່ສົ່ງຕົວນັ້ນ ຕ້ອງໃຫ້ການຊ່ວຍເຫຼືອທີ່ຈຳເປັນແກ່ອົງການທີ່ມີສິດອຳນາດ ຂອງ ສປປ ລາວ ໃນການກັກຕົວຊົ່ວຄາວ ແລະ ສົ່ງບຸກຄົນທີ່ຕ້ອງການຕົວ ຜ່ານດິນແດນ ຂອງ ສປປ ລາວ.

ໃນກໍລະນີ ການສົ່ງຜ່ານແດນທາງອາກາດ ແລະ ມີຄວາມຈຳເປັນຕ້ອງລົງຈອດສຸກເສີນ ຢູ່ດິນແດນ ຂອງ ສປປ ລາວ ບຸກຄົນທີ່ຕ້ອງການຕົວ ອາດຖືກກັກຕົວຊົ່ວຄາວ ຢູ່ໃນດິນແດນ ຂອງ ສປປ ລາວ ໄວ້ສູງສຸດບໍ່ໃຫ້ເກີນ ເຈັດສິບສອງ ຊົ່ວໂມງ. ລັດທີ່ຮ້ອງຂໍ ຫຼື ລັດທີ່ສົ່ງຕົວນັ້ນຕ້ອງໃຫ້ການຊ່ວຍເຫຼືອທີ່ຈຳເປັນແກ່ອົງການທີ່ມີສິດອຳນາດ ຂອງ ສປປ ລາວ ໃນການກັກຕົວຊົ່ວຄາວ ແລະ ສົ່ງບຸກຄົນທີ່ຕ້ອງການຕົວຜ່ານດິນແດນ ຂອງ ສປປ ລາວ.

ໃນການສົ່ງຜູ້ຮ້າຍຂ້າມແດນ ຈາກ ສປປ ລາວ ຜ່ານດິນແດນຂອງລັດທີສາມ ລັດທີ່ຮ້ອງຂໍ ຕ້ອງຂໍອະນຸຍາດການຜ່ານແດນຈາກລັດນັ້ນ.

**ມາດຕາ 28. ຄ່າໃຊ້ຈ່າຍໃນການສົ່ງຜູ້ຮ້າຍຂ້າມແດນ**

ຄ່າໃຊ້ຈ່າຍໃນການສົ່ງຜູ້ຮ້າຍຂ້າມແດນ ອອກຈາກດິນແດນ ຂອງ ສປປ ລາວ ໄປຍັງລັດທີ່ຮ້ອງຂໍ ເປັນຕົ້ນ ຄ່າໃຊ້ຈ່າຍໃນການຍຶດ, ການອາຍັດ, ການມອບຊັບສິ່ງຂອງ ແລະ ການຈັບຕົວ, ຄ່າໃຊ້ຈ່າຍໃນການສົ່ງຕົວຜ່ານດິນແດນຂອງ ສປປ ລາວ ແລະ ການແປເອກະສານ ໃຫ້ເປັນພາລະຂອງລັດທີ່ຮ້ອງຂໍ.

ຄ່າໃຊ້ຈ່າຍໃນການດຳເນີນຕາມຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຂອງ ສປປ ລາວ ໃຫ້ເປັນພາລະຂອງ ສປປ ລາວ.

ໃນກໍລະນີທີ່ສົນທິສັນຍາວ່າດ້ວຍ ການສົ່ງຜູ້ຮ້າຍຂ້າມແດນ ຫາກໄດ້ກຳນົດກ່ຽວກັບຄ່າໃຊ້ຈ່າຍໃນການດຳເນີນການສົ່ງຜູ້ຮ້າຍຂ້າມແດນ ເປັນຢ່າງອື່ນ ກໍໃຫ້ປະຕິບັດຕາມສົນທິສັນຍານັ້ນ.

**ມາດຕາ 29. ການແຈ້ງຜົນການດຳເນີນຄະດີ**

ລັດທີ່ຮ້ອງຂໍ ຕ້ອງແຈ້ງໃຫ້ ສປປ ລາວ ຊາບໂດຍໄວ ກ່ຽວກັບການດຳເນີນຄະດີ ຫຼື ການປະຕິບັດຄຳຕັດສີນຂອງສານ ຕໍ່ບຸກຄົນທີ່ຕ້ອງການຕົວ ຊຶ່ງໄດ້ສົ່ງໃຫ້ຕາມຄຳຮ້ອງຂໍ ຫຼື ກ່ຽວກັບການສົ່ງບຸກຄົນທີ່ຕ້ອງການຕົວດັ່ງກ່າວ ໄປຍັງລັດທີສາມ.

## ໝວດທີ 6
## ສປປ ລາວ ເປັນລັດທີ່ຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ

**ມາດຕາ 30. ການຍື່ນຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ**

ການຍື່ນຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຂອງ ສປປ ລາວ ໃຫ້ປະຕິບັດຕາມມາດຕາ 12 ຂອງກົດໝາຍສະບັບນີ້.

**ມາດຕາ 31. ການອອກຄຳສັ່ງເປີດການສືບສວນ-ສອບສວນ ແລະ ຄຳສັ່ງຈັບຕົວ**

ໃນກໍລະນີທີ່ຮູ້ໄດ້ຢ່າງແນ່ນອນວ່າ ຜູ້ຖືກຫາ ຫຼື ນັກໂທດ ໄດ້ເອົາຕົວຫຼົບໜີອອກຈາກ ສປປ ລາວ ໄປຍັງລັດອື່ນ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕຳຫຼວດ ຕ້ອງອອກຄຳສັ່ງເປີດການສືບສວນ -ສອບສວນ ແລ້ວສະເໜີໃຫ້ອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ອອກຄຳສັ່ງຈັບຕົວບຸກ ຄົນດັ່ງກ່າວ.

ອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ຕ້ອງສົ່ງຄຳສັ່ງຈັບຕົວ ແລະ ຄຳສັ່ງເປີດການສືບສວນ-ສອບສວນ ໃຫ້ອົງການໄອຍະການປະຊາຊົນສູງສຸດ ເພື່ອປະກອບຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ແລະ 14 ຂອງກົດໝາຍສະບັບນີ້ ແລ້ວສົ່ງໃຫ້ກະຊວງການຕ່າງປະເທດ ເພື່ອຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນໄປຍັງລັດທີ່ຖືກຮ້ອງຂໍ.

## ໝວດທີ 7
## ການຄຸ້ມຄອງ ແລະ ການກວດກາວຽກງານສົ່ງຜູ້ຮ້າຍຂ້າມແດນ

**ມາດຕາ 32. ອົງການຄຸ້ມຄອງວຽກງານສົ່ງຜູ້ຮ້າຍຂ້າມແດນ**

**ອົງການຄຸ້ມຄອງວຽກງານສົ່ງຜູ້ຮ້າຍຂ້າມແດນ ປະກອບດ້ວຍ:**

- ກະຊວງການຕ່າງປະເທດ;
- ກະຊວງປ້ອງກັນຄວາມສະຫງົບ;
- ອົງການໄອຍະການປະຊາຊົນສູງສຸດ;
- ສານປະຊາຊົນສູງສຸດ;
- ກະຊວງ ຍຸຕິທຳ;
- ອົງການປົກຄອງທ້ອງຖິ່ນ.

**ມາດຕາ 33. ສິດ ແລະ ໜ້າທີ່ຂອງກະຊວງການຕ່າງປະເທດ**

**ໃນການຄຸ້ມຄອງວຽກງານສົ່ງຜູ້ຮ້າຍຂ້າມແດນ ກະຊວງ ການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບນະໂຍບາຍ, ນິຕິກຳ ແລະ ລະບຽບການທີ່ພົວພັນເຖິງວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ພົວພັນ ແລະ ປະສານສົມທົບກັບລັດທີ່ຮ້ອງຂໍ ຫຼື ລັດທີ່ຖືກຮ້ອງຂໍກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ;
3. ຮັບ ແລະ ກວດກາຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຈາກລັດທີ່ຮ້ອງຂໍ ແລ້ວນຳສົ່ງເອກະສານ ຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນໃຫ້ອົງການໄອຍະການປະຊາຊົນສູງສຸດ;
4. ກວດກາ, ສົ່ງຄຳຮ້ອງຂໍ ແລະ ເອກະສານທີ່ຈຳເປັນ ເພື່ອຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ໃຫ້ລັດທີ່ຖືກຮ້ອງຂໍ;
5. ຈັດການມອບຮັບຜູ້ຮ້າຍຂ້າມແດນ ລວມທັງຊັບສິ່ງຂອງ ໂດຍປະສານສົມທົບກັບອົງການທີ່ມີສິດອຳນາດອື່ນ ຂອງ ສປປ ລາວ;
6. ປະສານສົມທົບ ແລະ ຕິດຕາມຜົນການດຳເນີນຄະດີສົ່ງຜູ້ຮ້າຍຂ້າມແດນຕໍ່ບຸກຄົນທີ່ຕ້ອງການຕົວກັບລັດທີ່ຮ້ອງຂໍ ພ້ອມທັງແຈ້ງຜົນການດຳເນີນຄະດີດັ່ງກ່າວ ໃຫ້ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງຊາບ;
7. ແຈ້ງຜົນຂອງການດຳເນີນຄະດີສົ່ງຜູ້ຮ້າຍຂ້າມແດນ ໃຫ້ລັດທີ່ຖືກຮ້ອງຂໍຊາບ;
8. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ແລະ ມີຄຳເຫັນຕໍ່ສົນທິສັນຍາສອງຝ່າຍ ຫຼື ຫຼາຍຝ່າຍ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ ຕາມການມອບໝາຍຂອງລັດຖະບານ;
9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
10. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕໍ່ຂັ້ນເທິງ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 34. ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນຄວາມສະຫງົບ**

**ໃນການຄຸ້ມຄອງວຽກງານສົ່ງຜູ້ຮ້າຍຂ້າມແດນ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບນະໂຍບາຍ, ນິຕິກຳ ແລະ ລະບຽບການທີ່ພົວພັນເຖິງວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຊີ້ນຳ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຈັບຕົວ, ກັກຕົວ, ກັກຂັງພາງ ຫຼື ປ່ອຍຕົວບຸກຄົນທີ່ຕ້ອງການຕົວ ຕາມທີ່ໄດ້ກຳນົດໄວ້ໃນຄຳສັ່ງຈັບຕົວ ແລະ ແຈ້ງໃຫ້ອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ;

4. ເກັບກຳຂໍ້ມູນຫຼັກຖານ ແລະ ຍຶດ ຫຼື ອາຍັດຊັບສິ່ງຂອງທີ່ກ່ຽວຂ້ອງກັບຄະດີ ຕາມຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ;

5. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ແລະ ມີຄຳເຫັນຕໍ່ສົນທິສັນຍາສອງຝ່າຍ ຫຼື ຫຼາຍຝ່າຍ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ;

6. ເຂົ້າຮ່ວມໃນການມອບຮັບຜູ້ຮ້າຍຂ້າມແດນ ລວມທັງຊັບສິ່ງຂອງ ໂດຍປະສານສົມທົບກັບອົງການທີ່ມີສິດອຳນາດອື່ນ ຂອງ ສປປ ລາວ;

7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

8. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕໍ່ຂັ້ນເທິງ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ ຫຼື ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 35. ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນສູງສຸດ**

**ໃນການຄຸ້ມຄອງວຽກງານສົ່ງຜູ້ຮ້າຍຂ້າມແດນ ອົງການໄອຍະການປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບນະໂຍບາຍ, ນິຕິກຳ ແລະ ລະບຽບການທີ່ພົວພັນເຖິງວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ເປັນໃຈກາງໃນການປະສານສົມທົບກັບຂະແໜງການອື່ນ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ;

3. ຊີ້ນຳ, ນຳພາ ແລະ ກວດກາ ອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ແລະ ອົງການໄອຍະການປະຊາຊົນພາກກາງ ໃນການອອກຄຳສັ່ງຈັບຕົວ, ກັກຂັງພາງ, ປ່ອຍຕົວ, ເກັບກຳຂໍ້ມູນຫຼັກຖານ, ຍຶດ, ອາຍັດຊັບສິ່ງຂອງ ທີ່ພົວພັນກັບການກະທຳຜິດຂອງບຸກຄົນທີ່ຕ້ອງການຕົວ ຕາມຄຳຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນ, ການສະຫຼຸບສຳນວນ ແລະ ສັ່ງຟ້ອງຂຶ້ນສານ, ຄຳຖະແຫຼງ ແລະ ຄຳສະເໜີຄັດຄ້ານ ຂອງອົງການໄອຍະການປະຊາຊົນຂັ້ນລຸ່ມ;

4. ແຈ້ງໃຫ້ກະຊວງການຕ່າງປະເທດຊາບ ກ່ຽວກັບຄຳຕັດສິນ ຫຼື ຄຳພິພາກສາກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ;

5. ເກັບກຳຂໍ້ມູນ, ສະຖິຕິ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ ເພື່ອແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງ;

6. ເຂົ້າຮ່ວມໃນການມອບຮັບຜູ້ຮ້າຍຂ້າມແດນ ລວມທັງຊັບສິ່ງຂອງ ໂດຍປະສານສົມທົບກັບອົງການທີ່ມີສິດອຳນາດອື່ນ ຂອງ ສປປ ລາວ;

7. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ແລະ ມີຄຳເຫັນກ່ຽວກັບສົນທິສັນຍາສອງຝ່າຍ ຫຼື ຫຼາຍຝ່າຍ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ;

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

9. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕໍ່ຂັ້ນເທິງ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 36. ສິດ ແລະ ໜ້າທີ່ຂອງສານປະຊາຊົນສູງສຸດ**

**ໃນການຄຸ້ມຄອງວຽກງານສົ່ງຜູ້ຮ້າຍຂ້າມແດນ ສານປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບນະໂຍບາຍ, ນິຕິກຳ ແລະ ລະບຽບການທີ່ພົວພັນເຖິງວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ແນະນຳທາງດ້ານວິຊາການ ໃນການພິຈາລະນາຕັດສິນ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ;
3. ເກັບກຳສະຖິຕິ, ຂໍ້ມູນຂ່າວສານ ແລະ ການຕັດສິນ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ;
4. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕໍ່ຂັ້ນເທິງ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 37. ສິດ ແລະ ໜ້າທີ່ຂອງກະຊວງຍຸຕິທຳ**

**ໃນການຄຸ້ມຄອງວຽກງານສົ່ງຜູ້ຮ້າຍຂ້າມແດນ ກະຊວງຍຸຕິທຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບນະໂຍບາຍ, ນິຕິກຳ ແລະ ລະບຽບການທີ່ພົວພັນເຖິງວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ເຂົ້າຮ່ວມ, ຊຸກຍູ້, ຊ່ວຍເຫຼືອ ແລະ ປະສານສົມທົບກັບຂະແໜງການອື່ນ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ເກັບກຳສະຖິຕິ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ;
4. ເຂົ້າຮ່ວມເຈລະຈາ, ປຶກສາຫາລື ແລະ ມີຄຳເຫັນກ່ຽວກັບສົນທິສັນຍາສອງຝ່າຍ ຫຼື ຫຼາຍຝ່າຍ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ;
5. ເຂົ້າຮ່ວມໃນການມອບຮັບຜູ້ຮ້າຍຂ້າມແດນ ລວມທັງຊັບສິ່ງຂອງ ໂດຍປະສານສົມທົບກັບອົງການທີ່ມີສິດອຳນາດອື່ນ ຂອງ ສປປ ລາວ;
6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
7. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານສົ່ງຜູ້ຮ້າຍຂ້າມແດນ ຕໍ່ຂັ້ນເທິງ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 38. ສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານສົ່ງຜູ້ຮ້າຍຂ້າມແດນ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ປະສານສົມທົບກັບອົງການທີ່ມີສິດອຳນາດ ຂອງ ສປປ ລາວ ໃນການຈັບຕົວ ແລະ ການກັກຂັງພາງ ລວມທັງການມອບຮັບຜູ້ຮ້າຍຂ້າມແດນ ແລະ ຊັບສິ່ງຂອງ ຕາມພາລະບົດບາດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 39. ອົງການກວດກາວຽກງານສົ່ງຜູ້ຮ້າຍຂ້າມແດນ**

ອົງການກວດກາວຽກງານສົ່ງຜູ້ຮ້າຍຂ້າມແດນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສົ່ງຜູ້ຮ້າຍຂ້າມແດນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້.

ເພື່ອຮັບປະກັນໃຫ້ວຽກງານສົ່ງຜູ້ຮ້າຍຂ້າມແດນ ມີຄວາມສະດວກ, ຖືກຕ້ອງ ສອດຄ່ອງ ແລະ ຍຸຕິທຳ ຕ້ອງມີການກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ສົນທິສັນຍາວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ.

**ມາດຕາ 40. ເນື້ອໃນການກວດກາວຽກງານສົ່ງຜູ້ຮ້າຍຂ້າມແດນ**

**ການກວດກາວຽກງານສົ່ງຜູ້ຮ້າຍຂ້າມແດນ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:**

1. ການປະຕິບັດລະບຽບກົດໝາຍ ກ່ຽວກັບການສົ່ງຜູ້ຮ້າຍຂ້າມແດນ;
2. ການນຳໃຊ້ມາດຕະການທາງດ້ານກົດໝາຍ ຕໍ່ບຸກຄົນທີ່ຕ້ອງການຕົວ;
3. ການມອບຮັບຜູ້ຮ້າຍຂ້າມແດນ ແລະ ຊັບສິ່ງຂອງ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 41. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງວຽກງານສົ່ງຜູ້ຮ້າຍຂ້າມແດນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

**ມາດຕາ 42. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 43. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສປປ ລາວ, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 44. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ເກົ້າສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສປປ ລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**